

# SuPER WE Coffee

## ວຽກເດັ່ນຂອງໂຄງການ
## ກັນຍາ - ພະຈິກ 2025

**ກັນຍາ:** ໂຄງການ SuPER WE ພາຜູ້ຜະລິດກາເຟ ແລະ ຊາ ເຈາະຕະຫຼາດ ງານວາງສະແດງທີ່ແຂວງຫຼວງພະບາງ 2025

**ຕຸລາ:** ໂຄງການ SuPER WE ພາ 'ກາເຟພູດອຍດາກຈຶງ' ບຸກຕະຫຼາດອາຊຽນ! ງານວາງສະແດງທີ່ບາງກອກສ້າງຍອດຂາຍ ແລະ ເຄືອຂ່າຍສາກົນ

**ພະຈິກ:** ສະຫະກອນກາເຟພູດອຍດາກຈຶງ 2 ທ່ານ ເຂົ້າຮ່ວມກອງປະຊຸມສະຫະກອນສາກົນຄັ້ງທີ 17 ທີ່ ປະເທດສີລັງກາ

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400 ຊາວສວນກາເຟ**

**280 ແມ່ຍິງຊົນເຜົ່າ**

ທາງອ້ອມ

**4,463 ປະຊາຊົນ**

**2,217 ແມ່ຍິງຊົນເຜົ່າ**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ







## ກັນຍາ

### ສົ່ງເສີມບົດບາດແມ່ຍິງ ໃຫ້ເປັນຜູ້ນຳທຸລະກິດກາເຟ ຜ່ານໂຄງການ SuPER WE



ໂຄງການ SuPER WE ໄດ້ຮ່ວມກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງເຊກອງ ປະສົບຜົນສຳເລັດໃນການຈັດກິດຈະກຳຝຶກງານ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງເປັນຜູ້ນຳໃນຂະແໜງກາເຟ, ໂດຍຈັດຂຶ້ນໃນລະຫວ່າງ ວັນທີ 2 ຫາ 17 ກັນຍາ ປີ 2025.

ກິດຈະກຳນີ້ມີຈຸດປະສົງເພື່ອ ພັດທະນາຄວາມຮູ້, ປະສົບການ ແລະ ທັກສະດ້ານການເປັນຜູ້ປະກອບການ ໃຫ້ແກ່ບັນດາຜູ້ຜະລິດກາເຟທີ່ເປັນເພດຍິງ ແລະ ຍົກສູງຄຸນນະພາບການຜະລິດ ແລະ ສົ່ງເສີມບົດບາດແມ່ຍິງໃນການນຳພາທຸລະກິດທີ່ຍືນຍົງ.





## ກັນຍາ

### ສະໜັບສະໜູນການສ້າງຕັ້ງສະຫະກອນ ຕາມຫຼັກການຂອງສະຫະກອນໃນ ສປປ ລາວ



ໂຄງການ SuPER WE ໄດ້ສົມທົບກັບຄູ່ຮ່ວມງານພາກລັດທັງໃນຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອລົງທົບທວນ ແລະ ເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບສະຫະກອນ, ລະບຽບ ແລະ ຫຼັກການສະຫະກອນ ເພື່ອໃຫ້ຊາວສວນຜູ້ຜະລິດກາເຟຂັ້ນບ້ານເຂົ້າໃຈຄວາມໝາຍ ແລະ ຫຼັກການພື້ນຖານທີ່ສຳຄັນຂອງສະຫະກອນ ພ້ອມທັງໄດ້ເປີດໂອກາດໃຫ້ສະມາຊິກຜູ້ທີ່ມີຄວາມສົນໃຈຂຽນໃບສະໝັກເຂົ້າເປັນສະມາຊິກສະຫະກອນກາເຟພູດອຍດາກຈຶງ ໃນລະຫວ່າງວັນທີ 7 ຫາ 14 ກັນຍາ 2025 ໃຫ້ແກ່ຊາວກະສິກອນຜູ້ຜະລິດກາເຟ 292 ທ່ານ (ຍິງ 179 ທ່ານ) ຢູ່ 15 ບ້ານເປົ້າໝາຍ ເມືອງດາກຈຶງ ແຂວງເຊກອງ, ເຊິ່ງສົ່ງຜົນໃຫ້ມີ 222 ຄອບຄົວ (ລວມຍິງ 55 ທ່ານ) ທີ່ສະໝັກ.



## ກັນຍາ

### ສຳຫຼວດຄວາມຕ້ອງການຂອງຜູ້ຜະລິດກາເຟ ແລະ ຜູ້ຊື້ກາເຟ

ໃນລະຫວ່າງ ວັນທີ 28 ກັນຍາ ຫາ ວັນທີ 1 ຕຸລາ ປີ 2025 ໂຄງການ SuPER WE ຮ່ວມກັບ ບໍລິສັດ EDC ໄດ້ສຳຫຼວດຄວາມຕ້ອງການຂອງຜູ້ຜະລິດກາເຟ,ຜູ້ຊື່ກາເຟ ແລະ ຜູ້ສົ່ງອອກກາເຟ ເພື່ອສຶກສາສິ່ງທ້າທາຍ, ໂອກາດໃນການເຂົ້າເຖິງຕະຫຼາດ, ທຶນ ແລະ ການຮ່ວມມືລະຫວ່າງຜູ້ຜະລິດກາເຟ ແລະ ຜູ້ຊື້ກາເຟ.

ການສຳຫຼວດແມ່ນມີຜູ້ເຂົ້າຮ່ວມຈາກສູນປຸງແຕ່ງກາເຟ 10 ແຫ່ງ, 10 ບ້ານ ແລະ ຜູ້ຊື້-ຜູ້ສົ່ງອອກກາເຟ 6 ບໍລິສັດໃນເມືອງດາກຈຶງ.






## ຕຸລາ

### ໂຄງການ SuPER WE ພາຜູ້ຜະລິດກາເຟ ແລະ ຊາ ເຈາະຕະຫຼາດ ງານວາງສະແດງທີ່ແຂວງຫຼວງພະບາງ 2025

ໂຄງການ SuPER WE ພ້ອມດ້ວຍຜູ້ຜະລິດກາເຟ 4 ທ່ານ ແລະ ພະນັກງານກະສິກຳ ແລະ ສິ່ງແວດລ້ອມແຂວງ, ໄດ້ເຂົ້າຮ່ວມງານວາງສະແດງຜະລິດຕະພັນກາເຟ ແລະ ຊາ ປະຈຳປີ 2025 ທີ່ແຂວງຫຼວງພະບາງ ລະຫວ່າງວັນທີ 30 ກັນຍາ ຫາ 7 ຕຸລາ 2025, ເຊິ່ງມີຈຸດປະສົງເພື່ອໂຄສະນາຄຸນນະພາບ ແລະ ສ້າງໂອກາດທາງທຸລະກິດ, ໂດຍໄດ້ໂຄສະນາເຂົ້າເຖິງຜູ້ເຂົ້າຮ່ວມງານຫຼາຍກວ່າ 300 ຄົນ ແລະ ສົ່ງຜົນໃຫ້ເກີດຍອດຂາຍທີ່ດີ, ມີການເຊື່ອມຕໍ່ກັບຜູ້ຊື້, ເຮັດໃຫ້ກາເຟດາກຈຶງເປັນທີ່ຮັບຮູ້ໃນປະເທດຫຼາຍຂຶ້ນ, ແລະ ຊາວກະສິກອນໄດ້ຮຽນຮູ້ພ້ອມທັງສ້າງເຄືອຂ່າຍກັບສະຫະກອນກາເຟໃໝ່.





# ຕຸລາ

**ໂຄງການ SuPER WE ພາ 'ກາເຟພູດອຍດາກຈຶງ' ບຸກຕະຫຼາດອາຊຽນ! ງານວາງສະແດງທີ່ບາງກອກສ້າງຍອດຂາຍ ແລະ ເຄືອຂ່າຍສາກົນ**



ໂຄງການ SuPER-WE ພ້ອມດ້ວຍຄູ່ຮ່ວມງານພາກລັດ, ຊາວສວນກາເຟ ແລະ ຜູ້ຊ່ຽວຊານ, ລວມ 8 ທ່ານ, ໄດ້ເຂົ້າຮ່ວມງານວາງສະແດງກາເຟອາຊຽນ 2025 ທີ່ບາງກອກ ລະຫວ່າງວັນທີ 28 ກັນຍາ ຫາ 7 ຕຸລາ 2025, ເພື່ອສົ່ງເສີມກາເຟພູດອຍດາກຈຶງໃຫ້ເປັນທີ່ຮູ້ຈັກໃນລະດັບພາກພື້ນ ແລະ ສ້າງໂອກາດທາງທຸລະກິດ, ໂດຍໄດ້ວາງສະແດງກາເຟອາຣາບິກາ ແລະ ສ້າງການເຊື່ອມຕໍ່ສາກົນທີ່ສຳຄັນເພື່ອຂະຫຍາຍຕະຫຼາດໃນອະນາຄົດ, ເຊິ່ງເປັນການສ້າງຊື່ສຽງໃຫ້ແກ່ກາເຟລາວ. ໂດຍມີຜູ້ເຂົ້າຮ່ວມ 13,595 ທ່ານ ຈາກ 50 ປະເທດໃນທົ່ວໂລກ ແລະ ມີຮ້ານວາງສະແດງກາເຟ 150 ຮ້ານ.




switchasia · Haliéus · 4FORM · coop International Cooperative Alliance Asia and Pacific · ITC · FAIRTRADE



# ຕຸລາ



## ຝຶກອົບຮົມການຂຽນແຜນທຸລະກິດ ໃຫ້ທາງຄະນະກະກຽມສ້າງສະຫະກອນພູດອຍດາກຈຶງ

ໃນລະຫວ່າງວັນທີ 12 ຫາ 18 ຕຸລາ 2025, ໂຄງການໄດ້ຈັດຝຶກອົບຮົມການຂຽນແຜນທຸລະກິດໃຫ້ທາງຄະນະກະກຽມສ້າງສະຫະກອນພູດອຍດາກຈຶງ, ເພື່ອກຳນົດທິດທາງ ແລະ ເປົ້າໝາຍທີ່ຊັດເຈນໃຫ້ສະຫະກອນ (ເຊິ່ງມີສະມາຊິກປັດຈຸບັນ 222 ຄອບຄົວ) ໂດຍຜູ້ເຂົ້າຮ່ວມທັງໝົດ 27 ທ່ານ (ຈາກໂຄງການ, ແຂວງ, ເມືອງ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ແລະ ຊາວສວນ) ຜູ້ເຂົ້າຮ່ວມໄດ້ຮຽນຮູ້ພື້ນຖານການວາງແຜນການຜະລິດ, ການວິເຄາະຕະຫຼາດ, ການວາງແຜນການເງິນ (ລວມທັງກະແສເງິນສົດ), ການປະຕິບັດຕົວຈິງໃນການຂຽນແຜນທຸລະກິດສະຫະກອນ, ແລະ ໄດ້ຕົກລົງກິດຈະກຳຫຼັກຂອງສະຫະກອນຄື: ທຸລະກິດຮວມກາເຟຂາວຂາຍຮ່ວມກັນ, ທຸລະກິດຫາເຟໝາກຊ້ອມ ແລະ ທຸລະກິດກາເຟໝາກຂົ້ວ.










ຕຸລາ

## ທົບທວນຄືນການຜະລິດ, ຄຸນນະພາບການປຸງແຕ່ງ, ການຕະຫຼາດ, ຍຸດທະສາດການຄ້າ, ການປະສານງານກຸ່ມ ແລະ ຄະນະກຳມະການຊີ້ນຳລວມ



ໃນລະຫວ່າງວັນທີ 20 ຫາ 24 ຕຸລາ 2025, ໂຄງການໄດ້ຈັດກອງປະຊຸມທົບທວນຄືນການຜະລິດ, ຄຸນນະພາບການປຸງແຕ່ງ, ການຕະຫຼາດ, ຍຸດທະສາດການຄ້າ, ການປະສານງານກຸ່ມ ແລະ ຄະນະກຳມະການຊີ້ນຳລວມ, ໂດຍມີຈຸດປະສົງເພື່ອທົບທວນກິດຈະກຳການຜະລິດກາເຟ ແລະ ຊອກຫາວິທີປັບປຸງຄຸນນະພາບເພື່ອສົ່ງອອກ, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 52 ທ່ານ (ຈາກໂຄງການ, ທີ່ປຶກສາຕ່າງປະເທດ, EDC, ຫ້ອງການກະສິກຳເມືອງ, ແລະ ຊາວກະສິກອນ) ແລະ ຜົນໄດ້ຮັບຄື: ໄດ້ມີການແລກປ່ຽນບົດຮຽນຈາກງານວາງສະແດງທີ່ຜ່ານມາ, ປຶກສາຫາລືການຕະຫຼາດ, ທົບທວນວຽກງານ ແລະ ບົດບາດຂອງກຸ່ມໃນປີ 2024-2025, ຄາດຄະເນເປົ້າໝາຍການເກັບກ່ຽວປີ 2025-2026, ຕົກລົງເຫັນດີກ່ຽວກັບການປຸງແຕ່ງເພື່ອບັນລຸຄຸນນະພາບ, ວາງແຜນການຕະຫຼາດ ແລະ ການເສີມສ້າງຄວາມສາມາດກຸ່ມຜະລິດສຳລັບປີ 2025-2026, ລວມເຖິງການຄຸ້ມຄອງຊັບສິນທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ.









# ຕຸລາ

## ຈັດສົ່ງວັດສະດຸ ແລະ ອຸປະກອນສຳລັບເຮືອນຕາກກາເຟ 10 ຫຼັງ

ໃນລະຫວ່າງວັນທີ 23 ຫາ ວັນທີ 28 ຕຸລາ 2025, ໂຄງການພ້ອມດ້ວຍຄູ່ຮ່ວມງານພາກລັດຂັ້ນເມືອງ ໄດ້ສຳເລັດການຈັດສົ່ງອຸປະກອນເຮືອນຕາກກາເຟລວມທັງໝົດ 10 ຫຼັງ ໃຫ້ແກ່ກຸ່ມບ້ານເປົ້າໝາຍ 7 ບ້ານ (ດາກວໍ, ດາກຣາຍ, ດາກຢອຍ, ດາກໂດມ, ດາກເດິນ, ດາກວາງ, ແລະ ດາກເອີຍ) ເພື່ອຊ່ວຍຊາວສວນປັບປຸງຄຸນນະພາບການຜະລິດກາເຟໃຫ້ໄດ້ມາດຕະຖານສູງຂຶ້ນ ແລະ ສາມາດສົ່ງຂາຍທັງພາຍໃນ ແລະ ຕ່າງປະເທດ.











## ຕຸລາ

# ສະໜັບສະໜູນຜູ້ຜະລິດກາເຟດ້ວຍການປູກຕົ້ນໄມ້ໃຫ້ໝາກເພື່ອເປັນຮົ່ມໃຫ້ຕົ້ນກາເຟ



ໃນລະຫວ່າງວັນທີ 24 ຫາ ວັນທີ 28 ຕຸລາ 2025, ໂຄງການພ້ອມດ້ວຍຄູ່ຮ່ວມງານພາກລັດຂັ້ນເມືອງໄດ້ສຳເລັດການຈັດສົ່ງເບ້ຍໄມ້ໃຫ້ໝາກລວມທັງໝົດ 1,578 ຕົ້ນ (ປະກອບດ້ວຍ ໝາກມ່ວງ 648 ຕົ້ນ, ໝາກອາໂວກາໂດ 210 ຕົ້ນ, ໝາກກ້ຽງ 240 ຕົ້ນ, ແລະ ໝາກມີ້ 480 ຕົ້ນ) ໃຫ້ແກ່ 29 ຄອບຄົວໃນ 6 ບ້ານເປົ້າໝາຍ (ດາກຣາຍ, ດາກເດັນ, ດາກປາວ, ດາກຢອຍ, ຄູນໄຊ, ແລະ ດາກວໍ), ເຊິ່ງມີຈຸດປະສົງເພື່ອໃຊ້ປູກເປັນຮົ່ມບັງໃຫ້ແກ່ຕົ້ນກາເຟ, ພ້ອມທັງເປັນວິທີປ້ອງກັນສັດຕູພືດແບບທຳມະຊາດ ແລະ ເປັນມິດກັບສິ່ງແວດລ້ອມ.







switchasia Halieus 4FORM coop International Cooperative Alliance Asia and Pacific ITC ILO FAIRTRADE



ຕຸລາ

## ປະຊຸມປະຈຳປີ SWITCH-Asia ຄັ້ງທີ 7 ທີ່ບາງກອກ, ປະເທດໄທ



ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ SWITCH-Asia ຄັ້ງທີ 7 ທີ່ບາງກອກ, ປະເທດໄທ, ພາຍໃຕ້ຫົວຂໍ້ "ການຂະຫຍາຍເສດຖະກິດໝູນວຽນໃນອາຊີ: ການເຊື່ອມຕໍ່ນະໂຍບາຍ, ການປະຕິບັດ, ແລະ ການລົງທຶນຜ່ານປະຕູໂລກຂອງສະຫະພາບ ເອີຣົ." ອົງການແຄຣ໌ ໄດ້ຮ່ວມວາງສະແດງຜົນງານຂອງຕົນກ່ຽວກັບກະສິກຳແບບຍືນຍົງ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ແລະ ລະບົບຕ່ອງໂສ້ມູນຄ່າທີ່ມີສ່ວນຮ່ວມ, ລວມທັງການລິເລີ່ມກາເຟຈາກດາກຈຶງ, ແຂວງເຊກອງ. ງານດັ່ງກ່າວໄດ້ນຳເອົາຜູ້ວາງນະໂຍບາຍ, ທຸລະກິດ, ແລະ ຄູ່ຮ່ວມພັດທະນາຫຼາຍກວ່າ 300 ທ່ານ ມາແລກປ່ຽນຄວາມຄິດເຫັນ ແລະ ເສີມສ້າງການຮ່ວມມືໃນພາກພື້ນ ເພື່ອອາຊີ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງຫຼາຍຂຶ້ນ.










# ພະຈິກ

## ກອງປະຊຸມປຶກສາຫາລື ກະກຽມ ແລະ ລວບລວມເອກະສານ ກ່ຽວກັບການສ້າງຕັ້ງສະຫະກອນກາເຟພູດອຍດາກຈຶງ

ໃນລະຫວ່າງວັນທີ 10 ຫາ 14 ພະຈິກ 2025, ໂຄງການໄດ້ສົມທົບກັບຄູ່ຮ່ວມງານພາກລັດ ພ້ອມດ້ວຍຄະນະກະກຽມ ໄດ້ຈັດກອງປະຊຸມກະກຽມ ແລະ ຮວບຮວມເອກະສານກ່ຽວກັບການສ້າງຕັ້ງສະຫະກອນກາເຟພູດອຍດາກຈຶງ ທີ່ຫ້ອງການແຄຣ໌ ເພື່ອຮັບປະກັນວ່າການກະກຽມເອກະສານໄດ້ມາດຕະຖານ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງລັດ, ໂດຍມີຜູ້ເຂົ້າຮ່ວມ 7 ທ່ານ, ເຊິ່ງໄດ້ສຳເລັດການລວບລວມເອກະສານສຳຄັນທັງໝົດ ກ່ອນກອງປະຊຸມສ້າງຕັ້ງສະຫະກອນກາເຟພູດອຍດາກຈຶງ.





switchasia Halieus 4FORM coop International Cooperative Alliance Asia and Pacific ITC ILO FAIRTRADE



# ພະຈິກ

## ສຳພາດຂໍ້ມູນການຕະຫຼາດ (ຜູ້ຊື້ ແລະ ສົ່ງອອກກາເຟ)



ໃນລະຫວ່າງວັນທີ 15 ຫາ 19 ພະຈິກ 2025 ທາງໂຄງການ ໄດ້ສົມທົບກັບ ບໍລິສັດທີ່ປຶກສາ EDC ລົງສຳພາດຂໍມູນຜູ້ຊື້ ແລະ ຜູ້ສົ່ງອອກກາເຟ ຢູ່ທີ່ເມືອງ ປາກຊ່ອງ ແລະ ເມືອງປາກເຊ ນະຄອນຈຳປາສັກ

ຈຸດປະສົງ: ເພື່ອເກັບກຳຂໍ້ມູນດ້ານຄຸນນະພາບ ແລະ ປະລິມານຈາກຜູ້ສົ່ງອອກກາເຟ, ສິ່ງທ້າທາຍ, ຄວາມຕ້ອງການ, ການເຊື່ອມໂຍງລະບົບຕ່ອງໂສ້ມູນຄ່າ ແລະ ໂອກາດທາງການຕະຫຼາດ.

ຜົນໄດ້ຮັບ: ໄດ້ສຳພາດກັບຜູ້ຊື້ ແລະ ຜູ້ສົ່ງອອກກາເຟ 10 ແຫ່ງ ຄື: ສະມາຄົມກາເຟລາວ 1 ແຫ່ງ, ສະຫະກອນກາເຟ 2 ແຫ່ງ, ບໍລິສັດ 3 ແຫ່ງ, ສິນເຊື່ອ ແລະ ເງິນຝາກປະຢັດ1 ແຫ່ງ, ທະນາຄານການຄ້າ 1 ແຫ່ງ ແລະ ຮ້ານກາເຟ 1 ແຫ່ງ. (ທັງໝົດ 20 ທ່ານ ແລະ ແມ່ຍິງ  6 ທ່ານ). ຈຸດປະສົງຂອງການສຳພາດນີ້ແມ່ນເພື່ອປະເມີນຄວາມຕ້ອງການກາເຟໃນດ້ານການຜະລິດ, ຄຸນນະພາບ, ການປຸງແຕ່ງ, ການສົ່ງອອກ, ແລະອື່ນໆ. ການສຳພາດໄດ້ດຳເນີນກ່ຽວກັບບັນຫາ ແລະ ສິ່ງທ້າທາຍໃນການສົ່ງອອກກາເຟ ແລະ ວິທີການແກ້ໄຂໃນອະດີດ ແລະ  ເພື່ອຊອກຫາວິທີທີ່ຈະສະໜອງສາຂາໃຫ້ຊາວສວນກາເຟໃນເມືອງດາກຈຶງ ແລະ ເພື່ອຈັບຄູ່ທຸລະກິດກາເຟກັບສະຖານະການຕົວຈິງ.





# ພະຈິກ

## ສະຫະກອນກາເຟພູດອຍດາກຈຶງ 2 ທ່ານ ເຂົ້າຮ່ວມກອງປະຊຸມ ສະຫະກອນສາກົນຄັ້ງທີ 17 ທີ່ ປະເທດສີລັງກາ



ຜູ້ຕາງໜ້າຈາກສະຫະກອນກາເຟພູດອຍດາກຈຶງ 2 ທ່ານ ເຂົ້າຮ່ວມກອງປະຊຸມ ສະຫະກອນສາກົນຄັ້ງທີ 17 ໃນລະຫວ່າງວັນທີ 24-27 ພະຈິກ 2025 ທີ່ ປະເທດສີລັງກາ ເພື່ອ ເສີມສ້າງຄວາມຮູ້, ຄວາມເປັນຜູ້ນຳ, ຫາໂອກາດຮ່ວມມື ລະດັບພາກພື້ນ, ໂຄສະນາສະຫະກອນໃຫ້ເປັນຕົວແບບທີ່ທົນທານຕໍ່ສະພາບ ອາກາດ, ແລະ ສ້າງເຄືອຂ່າຍ ເພື່ອການເຊື່ອມໂຍງຕະຫຼາດ ແລະ ການ ພັດທະນາສະຫະກອນໃນອະນາຄົດ.

ທ່ານນາງເພັດສະໝັນກ່າວວ່າ “ການເຂົ້າຮ່ວມໃນຄັ້ງນີ້ໄດ້ເປີດໂອກາດໃຫ້ ຂ້າພະເຈົ້າໄດ້ຮຽນຮູ້ຜົນປະໂຫຍດຂອງການສ້າງຕັ້ງສະຫະກອນ ແລະ ຍັງເປັນ ບົດຮຽນທີ່ສຳຄັນສຳລັບຂ້າພະເຈົ້າທີ່ສາມາດເອົາກັບໄປພັດທະນາສະຫະກອນ ກາເຟພູດອຍດາກຈຶງທີ່ກຳລັງຈະສະເໜີຂຶ້ນທະບຽນຢ່າງເປັນທາງການ”





# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານ ເສດຖະກິດໃຫ້ແກ່ແມ່ຍິງ

**ບັນທຶກ ແລະ ສຳພາດໂດຍ : ເກດເກສອນ ດວງມີນາ**

**ທ່ານນາງ ວິລະຄອນ ບັນທະເວີ**, ຄູ່ຮ່ວມງານຈາກພະແນກອຸດສະຫະກຳ ແລະ ການຄ້າ ແຂວງເຊກອງ, ໄດ້ເຂົ້າຮ່ວມ ASEAN Café Show. ລາວພົບຄວາມປະທັບໃຈ ຈາກວິທີຈັດງານ ແລະ ໄດ້ຮຽນຮູ້ຈາກຜູ້ຊ່ຽວຊານ ກ່ຽວກັບກາເຟ, ການຕະຫຼາດ, ແລະ ການສ້າງຄວາມສາມາດໃນຊຸມຊົນ.

ລາວໄດ້ເຫັນໂອກາດໃນການພັດທະນາຜະລິດຕະພັນ ດ້ວຍຄຸນນະພາບສູງ, ວັດຖຸດິບ ທ້ອງຖິ່ນ, ແລະ ການຜະລິດທີ່ຍືນຍົງ. ລາວໄດ້ເຫັນວິທີການປຸງແຕ່ງຫຼັງການເກັບກ່ຽວ , ເຄື່ອງຈັກປຸງແຕ່ງ Espresso, ແລະ ທັກສະໃໝ່ໆ ທີ່ນຳໄປໃຊ້ໃນຊຸມຊົນ.

**ລາວໄດ້ກ່າວວ່າ** "ປະສົບການນີ້ໄດ້ເປັນແຮງບັນດານໃຈ ແລະ ເປັນພື້ນຖານສຳລັບ ການພັດທະນາຕະຫຼາດລາວອອກສູ່ຕ່າງປະເທດ ແລະ ສ້າງເຄືອຂ່າຍສະໜັບສະໜູນຜູ້ ຜະລິດທ້ອງຖິ່ນໃນເມືອງດາກຈຶງ"


ທ່ານນາງ ວິລະຄອນ ບັນທະເວີ


ທ່ານ ມູດ ຖິ່ນດາກແຢນ

**ທ່ານ ມູດ ຖິ່ນດາກແຢນ**, ຊາວສວນຜູ້ຜະລິດກາເຟພູດອຍດາກຈຶງຈາກບ້ານດາກເດີນ, ໄດ້ເຂົ້າຮ່ວມງານ ASEAN Café Show 2025 ເປັນເທື່ອທຳອິດ. ງານນີ້ເປັນເວທີ ທີ່ລວມຜູ້ຜະລິດ ແລະ ນັກພັດທະນາກາເຟຈາກທົ່ວອາຊຽນ.

**ທ່ານມູດ**ເວົ້າດ້ວຍຮອຍຍິ້ມວ່າ "ຄວາມປະທັບໃຈທີ່ສຸດ ແມ່ນການໄດ້ເຫັນຄວາມຫຼາກ ຫຼາຍຂອງກາເຟ ແລະ ເຕັກໂນໂລຊີໃໝ່ໆ ທີ່ເພີ່ມມູນຄ່າໃຫ້ຜະລິດຕະພັນທ້ອງຖິ່ນ" ສິ່ງ ນີ້ເປັນແຮງບັນດານໃຈໃຫ້ລາວຢາກພັດທະນາກາເຟຂອງຕົນ ຈາກຫມາກຂາວ ສູ່ກາເຟ ຂົ້ວ ແລະກາເຟພ້ອມດື່ມ.

**ທ່ານມູດ** ໄດ້ກ່າວດ້ວຍຄວາມໝັ້ນໃຈວ່າ "ການເຂົ້າຮ່ວມງານນີ້ບໍ່ແມ່ນພຽງແຕ່ການໄດ້ ຮູ້ເຫັນສິ່ງໃໝ່ໆ ແຕ່ເປັນກ້າວທີ່ສຳຄັນຂອງການປ່ຽນແປງໃນເສັ້ນທາງກາເຟ ແລະ ຊີວິດຂອງຂ້າພະເຈົ້າ ໃນການທີ່ຈະພັດທະນາກາເຟພູດອຍດາກຈຶງໃຫ້ທັນສະໄໝ ແລະ ທຽບເທົ່າລະດັບສາກົນ."

switchasia | Haliéus | 4FORM | coop International Cooperative Alliance Asia and Pacific | ITC | FAIRTRADE

## ຕິດຕໍ່ພວກເຮົາໄດ້ທີ່:


**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**

ຫົວໜ້າ ອົງການ

ເບີໂທ: (+856) 20 5564 2235

ອີເມລ: keoamphone.souvannaphoum@care.org

**ທ່ານ ຄຸນທະນົງ ວັນທານຸວົງ**

ຫົວໜ້າ ຫ້ອງການແຂວງ ເຊກອງ

ເບີໂທ: (+856) 20 20 55015147

ອີເມລ: Khounthanong.vanthanouvong@care.org

**ທ່ານ ລີໄຊ ໂພທິສັດ**

ຜູ້ປະສານງານດ້ານການສື່ສານ

ເບີໂທ: (+856) 20 7777 9501

ອີເມລ: Lyxay.phothisut@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕູ້ ປ.ນ
4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລາມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org www.careint.org.la @careinlaos CARE International in Lao PDR


care®